ເຈ້ຍຂໍ້ມູນ

# ປ້ອງກັນລູກເກີດໃໝ່ຂອງທ່ານຈາກໂຣກ ໄອໄກ່



## ການສັກຢາປ້ອງກັນໂຣກໄອໄກ່ເຂັມດຽວ ໃນຊ່ວງລະຍະຖືພາ ສາມາດປ້ອງກັນລູກທີ່ເກີດໃໝ່ຂອງທ່ານ ໄດ້ນັບຈາກມື້ທີນຶ່ງ.

### ມູນຄວາມຈິງສໍາລັບບັນດາຜູ້ຍິງທີ່ຖືພາ

- ການສັກຢາປ້ອງກັນໂຣກໄອໄກ່ຕອນ 28 ອາທິດເປັນທາງທີ່ດີທີ່ສຸດໃນການປ້ອງກັນລູກຂອງທ່ານຈົນກວ່າ ຈະ ຮອດເວລາສັກຢາປ້ອງກັນໂຣກຄັ້ງທໍາອິດຂອງພວກເຂົາຕອນທີ່ມີອາຍຸຫົກອາທິດ.
- ດຽວນີ້ ຢາວັກຊີນ ແມ່ນຟຣີສໍາລັບຜູ້ຍິງທີ່ຖືພາທີ່ຢູ່ໃນຣັດ NSW
- ລູກທ່ານຍັງຈະຕ້ອງການສັກຢາປ້ອງກັນໂຣກໄອໄກ່ຕອນມີອາຍຸຫົກອາທິດ
- ໂຣກໄອໄກ່ເປັນໂຣກທີ່ຮ້າຍແຮງ ແລະ ມີທາງເປັນອັນຕຣາຍຕໍ່ຊີວິດ

### ໂຣກ ໄອໄກ່ ແມ່ນຫຍັງ?

ໂຣກໄອໄກ່ (ຫຼືເປັນທີ່ຮູ້ຈັກວ່າ ໂຣກໄອຫອບ) ເປັນໂຣກຕິດຕໍ່ອັນຮ້າຍແຮງດ້ວຍເຊື້ອແບັກທີເຣັຍທີ່ກໍ່ໃຫ້ເກີດການໄອເປັນລະຍະ. ໃນພວກຜູ້ໃຫຍ່ ອາການອາດຈະພໍປານກາງແຕ່ຖ້າເຊື້ອໂຣກແຜ່ຜາຍໄປຫາເດັກທາຣົກ ຊຶ່ງບໍ່ທັນໄດ້ຮັບການສັກຢາປ້ອງກັນໂຣກ ມັນກໍສາມາດເປັນອັນຕຣາຍຕໍ່ຊີວິດໄດ້.

### ລູກຂອງຂ້ອຍມີຄວາມສ່ຽງບໍ?

ມີ. ພວກເດັກທາຣົກຍັງບໍ່ສາມາດສັກຢາປ້ອງກັນໂຣກໄອໄກ່ໄດ້ຈົນກວ່າພວກເຂົາຈະມີອາຍຸຫົກອາທິດ. ການ ສັກຢາປ້ອງກັນໂຣກໄອໄກ່ນີ້ຈະດີທີ່ສຸດແມ່ນສັກຕອນຖືພາໄດ້28ອາທິດເພື່ອຈະໄດ້ໃຫ້ເວລາແກ່ຮ່າງກາຍຂອງ ທ່ານຜລິດພູມປ້ອງກັນທີ່ຈະຜ່ານເຂົ້າໄປຫາລູກໃນທ້ອງຂອງທ່ານກ່ອນເກີດ. ພູມປ້ອງກັນເຫຼົ່ານີ້ຈະ ຄຸ້ມຄອງລູກຂອງທ່ານຈົນກວ່າພວກເຂົາ ພ້ອມທີ່ຈະໄດ້ຮັບການສັກຢາປ້ອງກັນໂຣກຂອງພວກເຂົາເອງຕອນ ມີອາຍຸ 6 ອາທິດ.

### ການສັກຢາປ້ອງກັນໂຣກນີ້ມີຄວາມປອດພັຍບໍ?

ມີ, ຢາວັກຊີນນີ້ແມ່ນປອດພັຍຕໍ່ທັງຜູ້ຍິງທີ່ຖືພາແລະເດັກທາຣົກຖ້າຫາກວ່າສັກໃຫ້ຕອນຊ່ວງລະຍະຖືພາ. ການຄົ້ນຄວ້າຈາກປະເທດອະເມຣິກາ ແລະ ອັງກິດທີ່ພົວພັນກັບຜູ້ຍິງຖືພາຈໍານວນກວ່າ 40,000 ຄົນໄດ້ພົບວ່າມີອາການຂ້າງຄຽງພໍປານກາງເທົ່ານັ້ນເຊັ່ນອາການປວດ ຫຼື ແດງຢູ່ແຂນບ່ອນສັກຢາ.
ມັນບໍ່ເພີ້ມຄວາມສ່ຽງ ແລະ ການແພດ ແຫ່ງຊາດ ໄດ້ໃຫ້ຄໍາແນະນໍາແກ່ບັນດາຜູ້ຍິງຖືພາວ່າໃຫ້ສັກຢາປ້ອງກັນໂຣກໃນຊ່ວງລະຍະ ຖືພາໄດ້28ອາທິດ.

### ຂ້ອຍຕ້ອງເຮັດຫຍັງແດ່?

ຈົ່ງເວົ້າລົມກັບນາຍໝໍຂອງທ່ານໃນມື້ນີ້ກ່ຽວກັບການສັກຢາປ້ອງກັນໂຣກໄອໄກ່ຟຣີໃນຕອນຖືພາໄດ້ໄຕຣມາດທີສາມ.

ພູມປ້ອງກັນທີ່ທ່ານໄດ້ຈາກການສັກຢາປ້ອງກັນໂຣກໄອໄກ່ນີ້ຈະຈາງຫາຍໄປຕາມເວລາ ດັ່ງນັ້ນທ່ານຕ້ອງ ສັກຢານີ້ທຸກໆຄັ້ງທີ່ທ່ານຖືພາໄດ້ປະມານ 28 ອາທິດ.

ມັນຍັງເປັນສິ່ງສໍາຄັນທີ່ພວກຄົນທີ່ຈະຢູ່ໃກ້ລູກຂອງທ່ານໃນຊ່ວງລະຍະສອງສາມອາທິດຕົ້ນໆທີ່ເກີດມາ ໃຫ້ພວກເຂົາສັກຢາປ້ອງກັນໂຣກໄອໄກ່. ໃຫ້ແນ່ໃຈວ່າລູກຄົນອື່ນໆຂອງທ່ານກໍໄດ້ສັກຢານີ້ພ້ອມທັງຂໍໃຫ້ຜູ້ເບິ່ງ ແຍງແລະສະມາຊິກຄອບຄົວທີ່ໃກ້ຊິດຜູ້ທີ່ບໍ່ເຄີຍໄດ້ຮັບການສັກຢາປ້ອງກັນໄອໄກ່ພາຍໃນ 10 ປີ ທີ່ຜ່ານມານັ້ນ ຈົ່ງຂໍໃຫ້ພວກເຂົາສັກຢາປ້ອງກັນໂຣກໄອໄກ່ຢ່າງໜ້ອຍສອງອາທິດກ່ອນທີ່ພວກເຂົາຈະມາພົວພັນກັບລູກ ຂອງທ່ານ.

ທ່ານຍັງສາມາດປ້ອງກັນທ່ານເອງແລະລູກຂອງທ່ານຈາກການຕິດໂຣກໄຂ້ຫວັດອັນຮ້າຍແຮງໃນຕອນຖືພາ ດ້ວຍການຂໍໃຫ້ນາຍໝໍຂອງທ່ານສັກຢາປ້ອງກັນໂຣກໄຂ້ຫວັດໃຫ້ທ່ານໃນຊ່ວງໃດກໍໄດ້ໃນລະຍະຖືພາ.

*ການສັກຢາປ້ອງກັນໂຣກໄອໄກ່ຟຣີໃນຊ່ວງລະຍະຖືພາເປັນທາງທີ່ດີທີ່ສຸດໃນການປ້ອງກັນລູກເກີດໃໝ່ຂອງ ທ່ານນັບຈາກມື້ທີນຶ່ງ. ຈົ່ງເວົ້າລົມກັບນາຍໝໍຂອງທ່ານໃນມື້ນີ້ກ່ຽວກັບການສັກຢາປ້ອງກັນໂຣກຕ່າງໆ.*

ຂໍ້ມູນເພີ້ມຕື່ມກ່ຽວກັບໂຣກໄອໄກ່ມີໄວ້ໃຫ້ ທີ່
**www.health.nsw.gov.au/whoopingcough**

NSW GOVERNMENT | Health

Lao

ເຂົ້າເບິ່ງ: **health.nsw.gov.au/protectnewborns**